# ສິລະປະ

## ລາຍລາວບູຮານ

## ຫລວງພະບາງ

ແຕ້ມໂດຍ: ປລີດາ ສະຫວັດວົງ

PRIDA

ຂໍມອບໃຫ້ຫໍສະໝຸດ
ພະແນກສິລາ [illegible]

21/9/89

[illegible]

# ສິລະປະ

# ລາຍລາວບູຮານ

## ຫລວງພະບາງ

ຈັດພິມໂດຍ :

ສະຖາບັນຄົ້ນຄ້ວາສິລະປະວັນນະຄະດີແຫ່ງຊາດ

ໃນໂຄງການຮ່ວມມືແລະຊ່ວຍເຫຼືອຈາກ ກອງທຶນ ໂຕໂຢຕາ

THE TOYOTA FOUNDATION

ສະຫງວນລິຂະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

---------===00========

ສະຖາບັນ ວິທະຍາສາດ
ສັງຄົມ ແຫ່ງຊາດ.

/ເລກທີ 351/

-=0 ຂໍ້ຕົກລົງພິມປຶ້ມ ທີ່ເປັນຜົນງານຂອງ 0=-
ສະຖາບັນຄົ້ນຄວ້າສິລະປະວັນນະຄະ
ດີແຫ່ງຊາດ.

*****************

ເພື່ອປະຕິບັດຕາມແຜນການ ການຄົ້ນຄວ້າ ແລະ ການຮ່ວມມືຊ່ວຍເຫຼືອຈາກກອງທຶນ-ໂຕໂຍຕາ ໃຫ້ໄດ້ຕາມແຜນການ ທີ່ທາງສະຖາບັນດັ່ງກ່າວໄດ້ມີແລ້ວນັ້ນ ໃຫ້ປະກົດຜົນເປັນຈິງ.

I.- ສະຖາບັນວິທະຍາສາດສັງຄົມແຫ່ງຊາດ ຈຶ່ງຕົກລົງພິມປຶ້ມຕ່າງໆ ຈຳນວນ 4 ຫົວ, ເຊິ່ງມີຜູ້ຮັບຜິດຊອບດັ່ງລຸ່ມນີ້ :

1/- ພິມຜົນງານການແປ ນິທານພື້ນເມືອງ ຍີ່ປຸ່ນ 1 ຫົວ ຈຳນວນ 2.000 ສະບັບ. ໂດຍແມ່ນ ສ/ຫ ຫຸມພັນ ລັດຕະນະວົງ ຫົວໜ້າສະຖາບັນສິລະປະວັນນະຄະດີແຫ່ງຊາດ ເປັນຜູ້ຮັບຜິດຊອບໂຄງການນີ້.

2/- ພິມຜົນງານການສຳມະນາໜັງສືໃບລານທົ່ວປະເທດຄັ້ງທີ I ຈຳນວນ 1 ຫົວ 2.000 ສະບັບ. ໂດຍແມ່ນ ສ/ຫ ຄຳແພງ ເກຕະວົງ ເປັນຜູ້ຮັບຜິດຊອບໂຄງການນີ້.

3/- ພິມນິທານພື້ນເມືອງລາວ 2 ຫົວ, ຈຳນວນ 4.000 ສະບັບ, ໂດຍແມ່ນ ສ/ຫ ກິແດງ ພອນກະເສີມສຸກ ເປັນຜູ້ຮັບຜິດຊອບໂຄງການນີ້.

4/- ພິມປຶ້ມລາຍລາວພື້ນເມືອງ 2 ຫົວ, ຈຳນວນ 4.000 ສະບັບ, ໂດຍແມ່ນ ສ/ຫ ປີດາ ເປັນຜູ້ຮັບຜິດຊອບໂຄງການນີ້.

II.- ໃຫ້ຜູ້ຮັບຜິດຊອບແຕ່ລະໂຄງການດັ່ງກ່າວນັ້ນພົວພັນນຳໂຮງພິມ ຕາມເງື່ອນໄຂທຶນ-ຮອນການຊ່ວຍເຫຼືອທີ່ໄດ້ຕົກລົງກັນແລ້ວນັ້ນຕາມເໝາະສົມຂອງແຕ່ລະໂຄງການຂອງໃຜລາວ.

ວຽງຈັນ, ວັນທີ..16.../...11./...1988..

ປະທານສະຖາບັນວິທະຍາສາດ
ສັງຄົມແຫ່ງຊາດ

ປະທານ.

ສີຊະນະ ສີສານ

# ຄຳນຳ.

ຫລວງພະບາງເປັນນະຄອນທີ່ເກົ່າແກ່ນະຄອນໜຶ່ງຂອງລາວ ມີປະຫວັດການລະອຽດລະອ້ຽວ ເຕັມໄປດ້ວຍເລື່ອງລາວທີ່ພິດສະດານ, ເຄີຍເປັນສູນກາງທາງການເມືອງ ແລະ ວັດທະນະທຳ ທັງເຄີຍເປັນນະຄອນຫລວງຂອງອານາຈັກລ້ານຊ້າງຜ່ານຫລາຍຍຸກຫລາຍສະໄໝ.

ບໍ່ມີໃຜສາມາດຕັດໄດ້ຢ່າງແນ່ນຢຳເທື່ອເລີຍວ່າ ນະຄອນດັ່ງກ່າວນີ້ມີຕົ້ນກຳເນີດມາແຕ່ສະໄໝໃດແທ້ ເພາະບໍ່ທັນໄດ້ມີການຂຸດຄົ້ນທາງບູຮານຄະດີຢ່າງເປັນກິດຈະລັກສະນະ. ສິ່ງທີ່ພວກເຮົາພໍຮູ້ໄດ້ໃນປະຈຸບັນກໍ່ແມ່ນນະຄອນດັ່ງກ່າວນີ້ໄດ້ເຄີຍມີຊື່ວ່າເມືອງຊວາ ( ແຕ່ສະຕະວັດ ທີ XI ເຖິງສະຕະວັດ ທີ XIII ) ຊຽງດົງຊຽງທອງ ( ແຕ່ສະຕະວັດທີ XIII ເຖິງສະຕະວັດ ທີ XV ) ແລະ ຊື່ວ່າຫລວງພະບາງ ( ຕັ້ງແຕ່ສະຕະວັດທີ XV ເປັນຕົ້ນມາຮອດປະຈຸບັນ ). ເຄີຍເປັນນະຄອນຫລວງຂອງອານາຈັກລ້ານຊ້າງຕັ້ງແຕ່ສະໄໝຊຽງດົງ ຊຽງທອງຈົນເຖິງສະຕະວັດ ທີ XVI ຄືໄລຍະທີ່ພະເຈົ້າໄຊຍະເສດຖາທິລາດຍ້າຍນະຄອນຫລວງຂອງລ້ານຊ້າງມາຕັ້ງຢູ່ວຽງຈັນ.

ຊາວລາວ ຫລື ຊາວຕ່າງປະເທດທີ່ມາພົບພໍ້ຢ້ຽມຢາມນະຄອນນີ້ກໍ່ມັກຈະມີໃຫ້ສົມຍານາມວ່າ : " ນະຄອນແຫ່ງສິລະປະ ອັນພິດສະດານ ຫລື ນະຄອນແຫ່ງວັດທະນະທຳອັນລ້ຳເລີດ ".

ຫລວງພະບາງມີວັດຢູ່ດ້ວຍກັນ ໖໔ ວັດ, ອັນເປັນຄວາມເອກອ້າງ ແລະ ສັກສີທາງ ສິລະປະວັດທະນະທຳລະອຽດອ່ອນຂອງຊາວຫລວງພະບາງ ແລະ ປະຊາຊົນລາວທັງຊາດ. ຜ່ານມາຫລາຍຍຸກຫລາຍສະໄໝວັດວາອາຣາມໄດ້ຖືກມ້າງເພທຳລາຍຫລາຍຄັ້ງຫລາຍຫົນດ້ວຍສົງຄາມຣຸກຮານ ແລະ ໄພພິບັດທາງທຳມະຊາດອັນບໍ່ມີສິ້ນສຸດສຽງ, ບາງຄັ້ງເມືອງທັງເມືອງຖືກດັບມອດຍັງເຫລືອໄວ້ແຕ່ເຖົ່າກັບຖ່ານ ເທົ່ານັ້ນ ແຕ່ທຸກໆເທື່ອມັນກໍ່ຟື້ນຕົວຂຶ້ນມາໄດ້ດ້ວຍກຳລັງວັງຊາ ແລະ ພະລັງອັນໃໝ່ພ້ອມກັບຄວາມສົດສວຍງົດງາມອັນໃໝ່.

ປັດຈຸບັນ, ນະຄອນຫລວງພະບາງຄົງຍັງເຫລືອໄວ້ແຕ່ ໓໐ ກວ່າວັດເທົ່ານັ້ນ ເຊິ່ງແຕ່ລະວັດ ແຕ່ລະໂບດວິຫານມີວາດຊົງສະຖະປັດຕະຍະກຳຕ່າງໃຜຕ່າງມັນ ຕົກແຕ່ງປະດັບປະດາເອ້ຍອງດ້ວຍລວດລາຍທາງວິຈິດຕະກຳອັນພິດສະດານຕາມຮູບແບບ ແລະ ເອກະລັກແຕກຕ່າງກັນ.

ໂດຍພື້ນຖານແລ້ວວັດວາອາຣາມຂອງຫລວງພະບາງມີລັກສະນະຢູ່ສາມແບບດ້ວຍກັນຄືແບບ ຫລວງພະບາງເອງແບບຊຽງຂວາງ ແລະ ແບບວຽງຈັນ. ນອກນັ້ນຍັງມີການແລກປ່ຽນປະສົມປະສານ ກົມກຽວກັນກັບສິລະປະຂອງເຂດແຄວ້ນຕ່າງໆຂອງອານາຈັກລ້ານຊ້າງສະໄໝເກົ່າເຊັ່ນ: ລ້ານນາ ແລະ ສິບສອງພັນນາ ແລະ ຂອງປະເທດໃກ້ຄຽງທີ່ມີພື້ນຖານວັດທະນະທຳພຸດທະສາດສະໜານິກາຍເຖລະ ວາດດ້ວຍກັນເຊັ່ນ : ຫົງສາວະດີ, ສະຫຍາມ ແລະ ກຳປູເຈຍ ເປັນຕົ້ນ. ພວກເຮົາສາມາດສັງເກດ ເຫັນຮ່ອງຮອຍທາງດ້ານນີ້ຕາມລວດລາຍສິລະປະການປະດັບປະດາການປັ້ນການຄວັດ ແກະສະຫລັກ ການຫລໍ່ຢູ່ບາງວັດ.

ບັນດານັກປາດອາຈານຜູ້ໃຫຍ່ໆດ້ານສິລະປະໃນຫລວງພະບາງເຊັ່ນ; ທ່ານ ທິດຕັນ, ທ່ານ ມະນີວົງ ສາທຸໃຫຍ່ວັດຄີລີ ສາທຸໃຫຍ່ວັດຊຽງທອງ ແລະ ອາຈານໃຫຍ່ຄົນອື່ນໆອີກຕ່າງກໍ່ໄດ້ໃຫ້ທັດສະນະແບບ

ດຽວກັນວ່າ: ສິລະປະລວດລາຍແຂວງຫລວງພະບາງນີ້ນອກຈາກມີເອກະລັກຂອງຕົນເອງແລ້ວແນ່ນອນຍັງມີການແລກປ່ຽນແບບໄປໆມາໆກັບເພື່ອນບ້ານໃກ້ຄຽງອີກ, ແຕ່ຈຸດພິເສດແຫ່ງເອກະລັກສະເພາະ ຂອງຫລວງພະບາງໃນດ້ານລວດລາຍ ແລະ ດອກດວງນັ້ນແມ່ນມີຄວາມງາມເລີກຂຳ ສະອາດຕາອ່ອນຊ້ອຍນີ້ມນວນ ແລະ ເໜັງຕີງ ຫລື ດີ້ນ (໑) ແບບມີຊີວິດຊີວາເຊື່ອງຊ້ອນດ້ວຍຄວາມໝາຍອັນເລີກແລບ.

ລາຍລາວຫລວງພະບາງແບບດັ້ງເດີມເຊື່ງເຫັນວ່າສືບທອດມາແຕ່ສະໄໝຟ້າງຸ່ມສາມແສນໄທ ມາຮອດໄຊເສດຖາທິລາດນັ້ນເຫັນໄດ້ຈາກວັດວິຊຸນ, ວັດຊຽງທອງ ແລະ ລວດລາຍຕາມແທ່ນພະພຸດທະຮູບທີ່ສ້າງຂຶ້ນໃນສະໄໝນັ້ນ. ສີມີການອອກແບບຍັງບໍ່ທັນລະອຽດ ດ້ານວັດຖຸການກໍ່ສ້າງ ແລະ ເທັກນິກການກໍ່ສ້າງຍັງປະຖົມປະຖານຫລາຍ ແຕ່ນາຍຊ່າງສະໄໝນັ້ນໄດ້ໃຊ້ຄວາມພະຍາຍາມ ແລະ ຄວາມພາກພຽນປະກອບມັນຂຶ້ນມາໄດ້ຢ່າງປານີດສົມຄວນ, ສິລະປະການຫລໍ່ທອງກໍ່ຖືວ່າເປັນວຽກທີ່ດີເດັ່ນອັນໜຶ່ງເຊິ່ງ ມີພະພຸດທະຮູບອົງໃຫຍ່ວັດມະໂນລົມຫລໍ່ດ້ວຍທອງສຳລິດຂອງສະໄໝສາມແສນໄທຍັງເປັນອັນຢັ້ງຢືນຮອດທຸກວັນນີ້.

ລາຍລາວຫຼວງພະບາງບູຮານທີ່ປະດິດສ້າງຂຶ້ນຈຸງຫຼັງອັນເກົ່າອາໄສອັນເກົ່າເປັນຫຼັກວາດຊົງຂອງການສະຖາປັດຕະຍະກຳຍັງຮັກສາແຕ່ການປະດັບປະດານັ້ນປະກອບຂຶ້ນໃໝ່ສັບຊ້ອນຄວາມງາມ ຄວາມລະອຽດເລີກແລບເຂົ້າອີກ ເບິ່ງດ້ານຄວາມງາມ ແລະ ຄວາມເລີກຂຳແລ້ວເຫັນວ່າລື່ນອັນເກົ່າເລັກນ້ອຍ, ອັນທີ່ລ້ຳໜ້າໄປກວ່າເກົ່າແມ່ນຄວາມປານີດຄວາມລະອຽດອ່ອນທາງດ້ານສີໄມ້ລາຍມີດັ່ງເຫັນເປັນຕົວຢ່າງຈາກວັດແສນ, ວັດໃໝ່, ວັດສີມຸງຄຸນ, ວັດຄີລີ ແລະ ວັດທີ່ປະຕິສັງຂອນຄືນໃໝ່ເຊັ່ນ: ວັດໜອງ ຫໍພະໄຕປິດົກວັດໂພນເພົາ ຫ້ອງສະເຫວີຍລາດທີ່ພະລາຊະວັງເກົ່າ ຫໍລາຊະລົດວັດຊຽງທອງ ແລະ ແຫ່ງອື່ນໆອີກຫລາຍແຫ່ງ. ລວດລາຍລາວຫລວງພະບາງທີ່ປະດິດສ້າງຂຶ້ນໃໝ່ນີ້ເຖົ້າແກ່ອາວຸໂສໄດ້ໃຫ້ທັດສະນະວ່າສືບທອດມາແຕ່ສະໄໝໄຊເສດຖາທິລາດພຸ້ນ ໝາຍຄວາມວ່າແຕ່ລະຍຸກແຕ່ລະສະໄໝມີການຕໍ່ເນື່ອງສືບທອດກັນມາ ເປັນປົກກະຕິຈາກຮຸ່ນຄົນໜຶ່ງສູ່ຮຸ່ນຄົນໜຶ່ງ.

ລວດລາຍ ແລະ ດອກດວງອັນວິດງາມທີ່ປະດັບປະດາຢູ່ຕາມວັດວາອາຮາມ ແລະ ວັດຖຸ ຮັບໃຊ້ເຊັ່ນ : ພາຊະນະຮັບໃຊ້ອັນມີ ໂອ, ຂັນ, ຝັກດາບ, ຝັກມີດ, ບອກປູນ, ຖ້ວຍຊາມທີ່ເປັນທອງສຳລິດແລະນາກ, ຕະຫລອດຮອດແທ່ນພະພຸດທະຮູບຕ່າງໆນັ້ນ ບັນດານັກຈິດຕະກອນບູຮານລາວ ໄດ້ຖອດຖອນອອກມາຈາກດອກໄມ້ກາບໄມ້, ເຄືອໄມ້, ກີບເມກຟອງນ້ຳຕະຫລອດຮອດຄວາມງາມທາງທຳມະຊາດອື່ນອື່ນເຊັ່ນ : ຮູບສັດຕ່າງໆ ເປັນຕົ້ນເພິ່ນມັກຄວັດ ແຕ້ມຮູບນົກທົ່ງ ນົກທັດສະດີລີງຊ້າງມ້າ, ກະເລນ ,ນາກ, ນອນ, ມັງກອນ ແລະ ຄຸດ ເພື່ອໃຫ້ເກີດພາບແຫ່ງຄວາມງາມ ຄວາມຮູ້ສຶກນຶກຄິດ ແລະ ຄວາມມີຊີວິດຊີວາຂຶ້ນຕົ່ມ. ສິ່ງທີ່ລືມບໍ່ໄດ້ກໍ່ແມ່ນຮູບເທວະບຸດ ເທວະດາ, ພະພຸດທະຮູບ ຮູບທ້າວ, ຮູບນາງ - ພ້ອມທັງຮູບສັງຄົມຊີວິດການເຄື່ອນໄຫວຂອງຄົນບູຮານປະກອບເຂົ້າກັບດອກດວງທີ່ປະດັບປະດາດ້ວຍ ສິລະປະອັນອ່ອນຊ້ອຍເຊິ່ງນອກຈາກຈະສະແດງພາບແຫ່ງຄວາມງາມທາງດ້ານສິລະປະທາງທຳມະຊາດແລ້ວຍັງ

---

ເໜັງຕີງ ຫລື ດີ້ນ = ແມ່ນສັບສິລະປະເຊິ່ງແປວ່າ: ເມື່ອຄົນເຮົາເບິ່ງດອກດວງ ຫລື ຮູບຄວັດ ປະກົດເຫັນມັນເໜັງຕີງ ຄືດັ່ງມັນມີຊີວິດຢູ່.

ປະກອບເປັນພາບເລື່ອງໃນເທບນິຍາຍ ນິທານ ແລະ ນິຍາຍຕ່າງໆດ້ວຍເຊັ່ນ : ເລື່ອງພະລັກ ພະລາມ ສຽວສະຫວາດ ຈັນທະພານິດ ພະເຫວດສັນດອນ ນິທານໃນຄຳພີ ປັນຈະຕັນຕະ ນິທານມະໂຫສົດ ສິທົນມະໂນລາ ສຸລິວົງ ກາລະເກດ ສິນໄຊ ... ໆລໆ. ຮູບພາບປະດັບປະດາລວດລາຍເຫລົ່ານີ້ມີຢູ່ຕາມວັດຕ່າງໆເກືອບທຸກວັດ ແຕ່ລະວັດມີສີສັນຄວາມຈົບງາມ ແລະ ຄວາມພາກພຽນແຕກຕ່າງກັນເຊັ່ນ :ວັດຊຽງທອງມັກໃຊ້ຮູບທ້າວ ຮູບນາງໃນເລື່ອງສິທົນມະໂນລາ ແລະ ເລື່ອງໃນຄຳພີ ປັນຈະຕັນຕະ. ເລື່ອງ ພະເຫວດສັນດອນເຫັນມີຢູ່ວັດໃໝ່ ວັດລ່ອງຄູນທີ່ຂຽນເປັນພາບຝາພະນັງປະກອບລວດລາຍຟອກຄຳ ແລະປະສົມສີດ້ວຍສີທີ່ເອົາມາຈາກຕົ້ນຄາມ ເຂົ້າໝົ້ນ ນ້ຳຫາງ ຄັ່ງ ແລະ ສີທີ່ປະດິດຄິດແຕ່ງເອົາກັບ ທ້ອງຖິ່ນເອງ. ຮູບທິດສະກັນລອງສາດຕະສົນອາຄົມກັບບັນດາທະຫານເຫັນມີຢູ່ວັດວິຊຸນ, ຮູບວິສຸກຳເທວະບຸດ ທີ່ເປັນເທບພະເຈົ້າແຫ່ງການຊ່າງຮູບພະຄະເນດເທບພະເຈົ້າແຫ່ງສິລະປະ ແລະ ວິສາວະກຳ ຮູບນາງກິນນາລີ ທ້າວກິນນາລອນ ເທບພະເຈົ້າແຫ່ງທຳມະຊາດ ແລະ ເທວະຮູບອື່ນໆອີກທີ່ແຕ້ມຂຶ້ນຕາມ ຈິນຕະນາການຂອງຈິດຕະກອນສະໄໝບູຮານເຊັ່ນ : ເທບພະນົມ ພົມມິນິດ ພະຍານາກກັຽວຄໍພະຍາຄຸດ...ໆລໆ ພົບເຫັນຢ່າງມາກມາຍຕາມວັດຕ່າງໆເກືອບທຸກວັດ. ນອກຈາກແຕ້ມຮູບພາບຕາມເທບນິຍາຍຕາມນິ ທານຊາດົກ ແລະ ນິຍາຍຄຳກອນດັ່ງກ່າວມານີ້ແລ້ວເພິ່ນຍັງມັກແກະສະຫລັກຮູບພາບທີ່ມີລັກສະນະກ່ຽວພັນທາງປະຫວັດສາດເຂົ້ານຳເຊັ່ນ : ໃນສະໄໝທູດພານິດຂອງໂຮນລັງຊື່ ວັນວຸດສະຕົບ ມາຢ້ຽມຢາມອານາຈັກລ້ານຊ້າງສະໄໝລາຊະການຂອງພະເຈົ້າສູລິຍະວົງສາ ເພິ່ນໄດ້ຄວັດຮູບອາຄັນຕຸກະຜູ້ນີ້ໄວ້ທີ່ບານປະຕູສິມວັດປ່າແຄ, ຮູບທະຫານທີ່ເຂົ້າມາຮຸກຮານປຸ້ນສະດົມບ້ານເມືອງຫລວງພະບາງຕົ້ນສະຕະວັດທີ່ຊາວ ມີຢູ່ວັດລ່ອງຄູນດັ່ງນີ້ເປັນຕົ້ນ.

ໃນປຶ້ມລາຍລາວຫລວງພະບາງເຫລັ້ມນີ້ຄະນະກັບກຳພວກຂ້າພະເຈົ້າໄດ້ພະຍາຍາມຂຸດຄົ້ນ ແລະ ແກະຖອດເອົາລວດລາຍເກົ່າໆທີ່ມີຕາມວັດວາອາຣາມ ແລະ ບູຮານສະຖານທີ່ຫັກພັງໂດກເພກູດຫຼຽນ ໄປແລ້ວມາແຕ້ມຄືນໃຫ້ຖືກຕາມແບບທີ່ເປັນຂອງເດີມແທ້ເພື່ອຊ່ວຍການເຊີດຊູປົກປັກຮັກສາເອົາສິລະປະ ລວດລາຍເກົ່າແກ່ເດີມດາອັນເປັນມໍລະດົກລ້ຳຄ່າດ້ານວິຈິດຕະກຳປະຕິມາກຳທີ່ບັນດາບັກປາດອາຈານຮຸ່ນພະ ບູລຸດຂອງຊາດເຮົາໄດ້ສືບທອດຕໍ່ກັນມາເຖິງຮຸ່ນພວກເຮົານີ້ໄວ້ໃຫ້ຍືນຍົງຕະຫລອດໄປ. ພວກຂ້າພະເຈົ້າ-ຫວັງວ່າປຶ້ມລາຍລາວຫລວງພະບາງເຫລັ້ມນີ້ຄືກັນກັບເຫລັ້ມອື່ນໆ ນອກຈາກຈະເປັນການປົກປັກຮັກສາມໍລະດົກທາງວັດທະນະທຳຂອງຊາດແລ້ວຍັງຈະເປັນການປະກອບວັດຖຸດິບອັນລ້ຳຄ່າ ແລະ ຫາຍາກໃຫ້ແກ່ ບັນດາຄູອາຈານ ນັກຄົ້ນຄວ້ານັກຄົ້ນໄຫວ ແລະ ນັກສຶກສາທາງດ້ານວິຈິດຕະກຳກໍ່ຄືສິລະປະໂດຍທົ່ວໄປຕະຫລອດເປັນການເຜີຍແຜ່ຄວາມຮູ້ບາງຢ່າງໃນດ້ານວິຈິດຕະກຳ ການຕົກແຕ່ງເຂັບອງໃຫ້ແກ່ສາມັນຊົນຊາວລາວທົ່ວຊາດ ແລະ ຊາວຕ່າງປະເທດຜູ້ສົນໃຈໃນສິລະປະ ວັດທະນະທຳລາວເຮົາດ້ວຍ.

ສົມ ພຣະໄຊຍະມົງຄຸນ.

# ຄວາມຮູ້ສຶກຂອງຜູ້ແຕ້ມ

ປື້ມສິລະປະລາຍລາວບູຮານເຫຼັ້ມນີ້ ຂ້າພະເຈົ້າໄດ້ອອກເຮື່ອເທເຮຽເພື່ອຮິບໂຮມກ່າຍແຕ້ມກອດແບບເອົາຈາກສິ່ງກໍ່ສ້າງບູຮານ ປູຊະນີຍະສະຖານ ສິມວັດວາອາຮາມ ພະທາດເຈດີ ແລະອື່ນໆ ທີ່ສຳຄັນຫລາຍໆແຫ່ງ ສິລະປະລວດລາຍລາວບູຮານ ທີ່ເຫັນຢູ່ນີ້ ບໍ່ພຽງແຕ່ສະແດງອອກທາງດ້ານຄວາມງາມຂອງຮູບວັດຖຸ ທີ່ປະດັບປະດາສິ່ງກໍ່ສ້າງທັງນັ້ນ ແຕ່ຫາກຍັງສ່ອງແສງເຖິງຄຸນຄ່າທາງດ້ານຈິດໃຈ ນິດໄສໃຈຄໍຂອງຄົນລາວທີ່ສຸພາບອ່ອນໂຍນ ຊື່ສັດ ສຸດຈະລິດ ຖືກຕ້ອງທີ່ສຸດ ແລະອີກດ້ານໜຶ່ງກໍ່ສ່ອງແສງເຖິງປະເພນີ ຄວາມເຊື່ອຖື ວັດທະນະທຳ ແບບດຳລົງຊີວິດ ອັນດີງາມອີກດ້ວຍ ດັ່ງຫລາຍໆທ່ານໄດ້ປະສົບພົບເຫັນຢູ່ຕາມປູຊະນີຍະສະຖານ ວັດວາອາຮາມຕ່າງໆນັ້ນ ນັກສິລະປະລາວບູຮານເພິ່ນອີງໃສ່ທຳມະຊາດ ທີ່ສົດສວຍງົດງາມຊຶ່ງຕິດພັນຢູ່ກັບຊີວິດສັງຄົມປະຈຳວັນ ນັ້ນມາປະດິດຄິດແຕ່ງເປັນລວດລາຍ ຮູບແຕ້ມ ຄັດແກະສະລັກຕາມຄວາມອາດສາມາດແລະອຸປະນິດໄສໃຈຄໍຂອງຕົນ ແລະໃນແຕ່ລະທ້ອງຖິ່ນກໍ່ມີຫົວຄິດປະດິດສ້າງແຕກຕ່າງກັນອອກໄປ. ສິລະປະລາຍລາວບູຮານນີ້ໄດ້ມີມູນເຊື້ອສືບທອດກັນມາແຕ່ດຶກດຳບັນ ແມ່ນໃນປະຈຸບັນນີ້ ພວກເຮົາກໍ່ຍັງສືບຕໍ່ເສີມຂະຫຍາຍຢູ່ ເຖິງແມ່ນວ່າບ້ານເມືອງເຮົາໄດ້ຖືກ ຮຸກຮານ ແລະມ້າງເພທຳລາຍ ຈາກພວກສັກດີນາ ຈັກກະພັດຕ່າງຊາດ ຫລາຍຍຸກຫລາຍສະໄໝກໍ່ຕາມ ມູນເຊື້ອໃນການປະດິດຄິດແຕ່ງສິລະປະກໍ່ຍັງຝັງຢູ່ໃນສະໝອງຂອງຄົນລາວສືບທອດກັນມາ ແລະວັດຖຸສິລະປະກຳອອນບາງອັນກໍ່ຍັງຕົກຄ້າງໃຫ້ເຮົາເຫັນໄດ້ຢູ່ຮອດປະຈຸບັນນີ້ ແຕ່ກໍ່ມີຈຳນວນໜ້ອຍ.

ຈຸດປະສົງຂອງການຮິບໂຮມກ່າຍແຕ້ມສິລະປະລາຍລາວບູຮານນີ້ກໍ່ຍ້ອນຫ່ວງວ່າ ສິລະປະລາວບູຮານທີ່ຈົບງາມມີຄ່າອັນປະເສີດນີ້ ຈະອັນຕະລະທານສູນຫາຍໄປແບບບໍ່ເຫັນກົກເຫັນເຄົ້າ ແລະຈະສ້າງຄວາມຫຍຸ້ງຍາກໃຫ້ແກ່ລູກຫລານ ຜູ້ທີ່ຈະສືບທອດມູນມໍລະດົກອັນດີງາມໃນຂ້າງໜ້າ ເພາະວ່ານັບດາສິລະປະລາວບູຮານດັ່ງກ່າວນີ້ ມີສິ່ງກໍ່ສ້າງບາງບ່ອນກໍ່ໂດກພຸ ບາງບ່ອນຖືກນ້ຳເຊາະ ບາງບ່ອນຖືກປວກກັດ ດິນກຸ່ມ ຕົ້ນໄມ້ເກີດໃສ່ ດັ່ງນີ້ເປັນຕົ້ນ ທີ່ສຳຄັນອີກອັນໜຶ່ງນັ້ນກໍ່ເພື່ອເສີມຂະຫຍາຍຫົວຄິດປະດິດສ້າງທາງດ້ານສິລະປະໃຫ້ຈະເລີນກ້າວໜ້າ ແລະຕອບສະໜອງໄດ້ບັນດາຂໍ້ມູນແກ່ຄູອາຈານ ນັກຮຽນ ນັກສຶກສາ ນັກຄົ້ນຄວ້າສິລະປະລາຍລາວໃນຕໍ່ໜ້າ.

ວິທີການລວບລວມແຕ້ມກ່າຍຕົວຈິງກ່ອນຈະມາເປັນປື້ມສິລະປະລາຍລາວບູຮານຫົວນີ້ໄດ້ນັ້ນ ຂ້າພະເຈົ້າໄດ້ໃຊ້ເວລາດົນນານຫລາຍເດືອນ

24/VII
ຫ້າມຈຳໜ່າຍ

ໃຊ້ທຶນຮອນຂອງກະຊວງສຶກສາທາລາຍພໍສົມຄວນ ລົງໄປຊອກຄົ້ນຫາ
ເພື່ອແຕ້ມກ່າຍເອົາລວດລາຍດອກດວງຕົວຈິງທີ່ຍັງເຫຼືອຄ້າງຕາມວັດວາອາ
ຮາມເກົ່າແກ່ຫລາຍແຫ່ງນັ້ນໄດ້ມີຂໍ້ຫຍຸ້ງຍາກສັບສົນເສັ້ນທາງຫ່າງໄກແລະ
ລຳບາກ ຫລົ້ນປ່າບຸດົງ ຂຶ້ນພູລົງຫ້ວຍ ແລະຂໍ້ຫຍຸ້ງຍາກອີກອັນໜຶ່ງນັ້ນ ຄື
ເມື່ອໄດ້ພົບວັດຖຸສິລະປະລາວບາງອັນແລ້ວກໍມີສະພາບໂດກຜຸຫລາຍ ຕົ້ນຕໍ
ປວກກັດ ນ້ຳຊະ ຕົ້ນໄມ້ເກີດໃສ່ຄຸ້ງໄດ້ກ່າວມາແລ້ວນີ້ໄດ້ສ້າງຄວາມຫຍຸ້ງຍາກ
ສັບສົນໃຫ້ແກ່ການກ່າຍແບບທີ່ສຸດ ຕ້ອງໄດ້ເພີ້ມຄວາມອົດທົນສູງຈຶ່ງສຳ
ເລັດໜ້າທີ່ນີ້ໄດ້ແຕ່ເຖິງປານນັ້ນກໍຍັງບໍ່ແລ້ວ ເມື່ອກັບມາບ້ານເຮືອນຍັງໄດ້
ແຕ້ມໄດ້ກ່າຍຄືນອີກ ນີ້ຕ້ອງໄດ້ໃຊ້ຄວາມມານະພະຍາຍາມແລະອົດທົນຫຼາຍ
ຂຶ້ນກວ່າຈະສຳເລັດໄດ້ ເພື່ອບໍ່ໃຫ້ມັນຂາດເສຍບ່ອນໃດບ່ອນໜຶ່ງຂອງສີໄມ້
ລາຍມືບູຮານ ແລະໃຫ້ຄົບຖ້ວນທຸກອັນຕາມຂໍ້ມູນເກົ່ານັ້ນ .

ຜົນທີ່ຈະໄດ້ຮັບໃນສະເພາະໜ້ານີ້ ນັ້ນກໍເພື່ອເປັນຄູ່ມືຄົ້ນຄວ້າຂອງ
ຄູອາຈານ ທີ່ສອນສິລະປະລາຍລາວ ແລະເປັນເອກະສານຄົ້ນຄວ້າຮ່ຳຮຽນຂອງ
ນັກຮຽນ ນັກສຶກສາ ຜູ້ຊຶ່ງຈະສືບທອດມູນມໍລະດົກອັນປະເສີດ ແລະລ້ຳຄ່າ
ໃນດ້ານສິລະປະລາຍລາວໃຫ້ເປັນທີ່ເອກອ້າງທະນົງໃຈຂອງລູກຫລານ ລາວ
ເຮົາໃຫ້ຍືນຍົງຄົງຕົວຕະຫລອດໄປໃນອານາຄົດ .

ການຄົ້ນຄວ້າກ່າຍແຕ້ມລວດລາຍບູຮານເຫຼັ້ມນີ້ແມ່ນດ້ວຍຄວາມ
ເອົາໃຈໃສ່ແລະຊີ້ນຳຢ່າງໃກ້ຊິດຂອງ ທ່ານ ພູມີ ວົງວິຈິດ ກຳມະການກົມການ
ເມືອງ ສູນກາງພັກປະຊາຊົນປະຕິວັດລາວ, ຮອງປະທານສະພາລັດຖະມົນຕີ
ຜູ້ວ່າການແທນປະທານປະເທດ ແລະປະທານສູນກາງແນວລາວສ້າງຊາດ .

ປຶ້ມສິລະປະລາຍລາວບູຮານເຫຼັ້ມນີ້ ຍັງບໍ່ທັນຄົບຖ້ວນແລະສົມບູນ
ອາດມີການຂາດຕົກບົກພ່ອງ ຢ່າງໃດກໍດີ ຫວັງວ່າທ່ານຜູ້ອ່ານຜູ້ນຳໃຊ້
ປຶ້ມເຫຼັ້ມນີ້ ຈະໃຫ້ຄວາມຮ່ວມມືຕຳໜິຕິຊົມເພື່ອຈະໄດ້ປັບປຸງແກ້ໄຂ
ໃຫ້ດີຂຶ້ນແລະສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການໄດ້
ເປັນຢ່າງດີ .

ວຽງຈັນ, ວັນທີ ໒໗ ທັນວາ ໑໒ - ໑໙໗໗.

ປລິດາ ສະຫວັດວົງ

ສິລະປະ ແລະ ວັດທະນະທຳນັ້ນ ໂດຍທົ່ວໄປແລ້ວ ແມ່ນ ວິນຍານຂອງຊາດໜຶ່ງໆ. ມັນໄດ້ສະທ້ອນ ຊີວິດຄວາມເປັນຢູ່ ຂອງສັງຄົມ ສະຕິປັນຍາ ຄວາມໃຝ່ຝັນ ແລະ ຄວາມມຸ່ງມາດ ປາຖະໜາ ຂອງຜູ້ຄົນຮຸ່ນຕ່າງໆ ທອດກາຍມາ ໃນຮູບຂອງສິນທອນພາບ ແລະ ສິລະປະ ເຊິ່ງຖ່າຍທອດຕໍ່ກັນມາ ແຕ່ຮຸ່ນຄົນນັ້ນ ເຖິງຮຸ່ນຄົນນີ້.

ການເກັບກຳລວດລາຍ ສິລະປະ ພື້ນເມືອງລາວ ຈາກທ້ອງຖິ່ນຕ່າງໆ ເປັນຕົ້ນແມ່ນ ຂາວາລີ ເສດາເຫຼືອ ສະຫຼັກວັດ ພຸ້ນ ຂອງວັດວາອາຣາມ ທີ່ເກົ່າແກ່ ໂດຍທ່ານ ປະທີບ ສະຫວັດດີ ນັ້ນ ນອກຈາກຈະເປັນການປົກປັກຮັກສາ ມໍລະດົກ ແລະ ຮ່ອງຮອຍ ສິ່ງທີ່ລາຍພື້ນເມືອງ ວິຈິດ ພິດສະດານ ຂອງຈິດຕະກອນ ປະຕິມາກອນ ແລະ ສະຖາປະນິກ ບູຮານ ຂອງລາວເຮົາໄວ້ໃຫ້ຍືນຍົງຕະຫຼອດໄປແລ້ວ ຍັງມີຄວາມສຳຄັນ ຢ່າງໃຫຍ່ຫຼວງ ທາງດ້ານ ປະຫວັດສາດ ແລະ ສິລະປະສາດ ອີກດ້ວຍ

ສະຖາບັນຄົ້ນຄວ້າສິລະປະວັນນະຄະດີແຫ່ງຊາດ ຜູ້ຈັດພິມ ພິມງານຂອງທ່ານ ຮ່ວມກັບ ທາງທ່ານ ໂຕໂຢຕາ ຂໍສະແດງຄວາມ ຊົມເຊີຍ ຄວາມ ບາກບັ່ນພະຍາຍາມ ແລະ ນ້ຳໃຈ ເສຍສະລະ ອັນສູງສົ່ງ ເພື່ອເຫັນແກ່ປະໂຫຍດຂອງຊາດ ຂອງທ່ານ ຫຼາຍ ເປັນຢ່າງສູງ ແລະ ຂໍອວຍພອນໃຫ້ທ່ານ ຈົ່ງປະສົບຄວາມສຳເລັດ ເທື່ອໃໝ່ໃນ ຄວາມພະຍາຍາມ ສ້າງສຸນງາມ ຄວາມດີຂອງທ່ານ ເພື່ອຊາດຕໍ່ໄປດ້ວຍ

ຫົວໜ້າສະຖາບັນ ຄົ້ນຄວ້າສິລະປະວັນນະຄະດີແຫ່ງຊາດ

ພົມ ລັດຕະນະວົງ

# ສາລະບານ


| | | |
|---|---|---|
| ໜ້າ : | 1 - 6 | ລາຍດອກຖ້ຳຕິ່ງແລະວັດປາກອູ |
| | 7 - 15 | - " - ວັດຫໍສ່ຽງ |
| | 16 - 39 | - " - ວັດວິຊຸນ |
| | 40 - 43 | - " - ຫໍລະຄອນເກົ່າ ( ຢູ່ກ້ອງຫໍພິພິດທະພັນ ) |
| | 44 - 53 | - " - ວັດໃໝ່ |
| | 54 - 57 | - " - ວັດແສນ |
| | 58 - 88 | - " - ວັດຊຽງທອງ |
| | 89 - 100 | - " - ວັດລ້ອງຄູນແລະວັດຖ້ຳ |
| | 101 --------- | - " - ແຂນນາງວັດຊຽງແມນແລະວັດຄີລີ |
| | 102 --------- | - " - ແຂນນາງວັດສີບຸນເຮືອງແລະວັດຫາດສ້ຽວ |
| | 103 --------- | - " - ແຂນນາງວັດຊຽງທອງ |
| | 104 - 106 | - " - ຊຸ່ມປະຕູແລະຊຸ່ມພະເຈົ້າວັດຊຽງແມນ |
| | 107 - 109 | - " - ສີໜ້າທາດຈອມສີ |
| | 110 --------- | - " - ສີໜ້າຫໍແຈກວັດໃໝ່ |
| | 111 - 112 | - " - ສີໜ້າວັດຊຽງທອງ |
| | 113 --------- | - " - ຮວງເຜ້ງວັດຊຽງທອງ |
| | 114 - 115 | - " - ດ້ານໜ້າອຸບມຸງວັດຊຽງທອງ |
| | 116 - 117 | - " - ປະຕູວັດຊຽງທອງ |
| | 118 --------- | - " - ປະຕູວັດອາຮາມ |
| | 119 - 121 | - " - ປະຕູວັດວິຊຸນ |
| | 122 --------- | - " - ປະຕູອູບມຸງວັດໃໝ່ແລະວັດຫໍສ່ຽງ |
| | 123 --------- | - " - ປ່ອງຢ້ຽມວັດຫໍສ່ຽງ |
| | 124 --------- | - " - ປະຕູວັດໂພນໄຊ |
| | 125 --------- | - " - ລາຍດອກປະຕູ ( ອຸບມຸງ ) ວັດຊຽງມ່ວນແລະປະຕູວັດສັງຄະໂລກ |
| | 126 - 127 | - " - ປະຕູວັດແສນ |
| | 128 --------- | - " - ປະຕູວັດສັງຄະໂລກ |
| | 129 --------- | - " - ປະຕູວັດປາກຫລີງແລະວັດສີມຸງຄຸນ |
| | 130 --------- | - " - ປະຕູວັດປາກອູແລະວັດປາກເຊືອງ |
| | 131 - 132 | - " - ປະຕູວັດດອນໂມ |
| | 133 - 134 | - " - ເຄືອຄວັດຊອດວັດວິຊຸນແລະຂັ້ນໄດທີ່ທຳມາດເກົ່າ |
| | 135 --------- | - " - ຮາວທຽນວັດຊຽງມ່ວນ |
| | 136 --------- | - " - ຮາວທຽນວັດຈຸມຄ້ອງ |
| | 137 --------- | - " - ພາຖາດໃສ່ດອກໄມ້ວັດຊຽງທອງ |
| | 138 --------- | - " - ວັດວິຊຸນ . |

# ຖ້ຳຕິ່ງ ປາກອູ

- ລາຍດອກປະດັບສີໜ້າຊຸ່ມປະຕູຖ້ຳເບື້ອງເທິງແລະຮາງລິນວັດປາກອູ

# ລາຍດອກ ກົ້ໂຕິ່ງ ເບື້ອງເທິງ





# ລາຍດອກ ກ້ຳຕິ່ງ ເບື້ອງເທິງ









# ລາຍດອກ ກ້ຳຕີ່ງ ເບື້ອງເທິງ







ລາຍດອກ ກ້ຳຕິ່ງ ເບື້ອງລຸ່ມ



ດ້ານຫົວ ຮາງລິນ ວັດປາກອູ



ດ້ານຂາງ ຮາງລິນ ວັດປາກອູ



# ວັດ ຫໍ່ສຽງ

- ລາຍດອກປະດັບຂອບຕີນເສົາແລະລາຍດອກພອກປະດັບເພດານສິມ

ລາຍດອກກ້ານປູ " ວັດຫໍສ່ຽງ "



ລາຍດອກສ້ອຍສາ ວັດບໍສ່ຽງ



ລາຍດອກຕາເວັນ ວັດບໍສ່ຽງ



# ລາຍດອກພອກ ວັດບໍ່ສຽງ



ຮູບພະນົມ ລາຍພອກ
ວັດບຳສ່ຽງ



ລາຍດອກບົວເຄືອ
ຮີບນ້າກະດີ ວັດບ່ຳສ່ຽງ



1. ລາຍດອກບົວເຄືອ

2. ສ້ອຍສາລ້າຍ ປ້ານລົມ

ວັດ ບໍສ່ຽງ



1.



2.

# ລາຍດອກຂອບ ເຄືອກູດ







# ລາຍເທົາ ເຄືອກ້ຽວ



# ວັດ ວິຊຸນ

- ລາຍດອກປະດັບຂອບແຜ່ນຕ່າງໆທີ່ພົບເຫັນຢູ່ຕາມແຈເສົາດ້ານຫລັງພະໃຫ່ຍໃນສິມ

- ມີລາຍດອກທີ່ຄວັດດ້ວຍໄມ້ແລະລາຍດອກທີ່ເຮັດດ້ວຍຂະມຸກ

( ສ່ວນຫລາຍດອກເຫລົ່ານີ້ເຫັນແຕກຫັກແລະພຸພັງຫລາຍ )

# ລາຍດອກບົວເຄືອ



## ລາຍດອກ ກະຈັງຕາອ້ອຍເທດ





ລາຍດອກຕາອ້ອຍ ເບດ



ລາຍດອກ ຕາອ້ອຍ



ລາຍດອກ ສ້ອຍສາ



ລາຍດອກສ້ອຍສາ

# ລາຍດອກສ້ອຍສາລ້າຍ



# ລາຍດອກ ສ້ອຍສາລ້າຍ



24/VII
ຫ້າມຈຳໜ່າຍ

ລາຍດອກເຄືອເຫົາ



# ລາຍເຫົາ ເຄືອກ້ຽວ



# ລາຍດອກເຄືອກູດ



# ເທບເກສອນ



ລາຍດອກຂອບ



# ລາຍດອກກາບບົວ



# ລາຍດອກ ກາບບົວ





ລາຍ ຂອດ ກະຈັງເຫດ

# ລາບຕີນເສົາ



# ລາຍດອກແຈຂອບ



## ລາຍດອກ ກົ່ນ ດົກນາກ



# ລາຍດອກແຈຊອບ



# ລາຍດອກແຈຂອບ



ລາຍດອກ ແມ່ສາຍລາຍຂອດ





ລາຍດອກ ແມ່ສາຍລາຍຂອດ





## ລາຍດອກ ແມ່ສາຍລາຍຂອດ





# ຫົວລະຄອນເກົ່າ

( ພົບເຫັນຢູ່ກອງຫໍພິພິດທະພັນ )





ຫານຸມານ





ມັດສານຸ

ຄິລິທອນ

ສັງຄີບ



ພາລີ







ນັງກ່ລະກັນ



ວິລຸນນະຈຳບັງ



ອິງຄົດ

24 / VII





ທົດສະກັນ





ຍັກສາ

# ວັດໃໝ່

- ລາຍດອກເຫລື້ມນີ້ເຮັດດ້ວຍຂະມຸກ

ສ່ວນຫລາຍເຫັນແຕກຫັກພຸພັງຢູ່ຕາມກ້ອງຕະລ່າງກຸດຕິແລະໃນກະຕິບຫໍໄຫ້ວ

# ລາຍດອກຊິ້ງກາບິນໃບເທດ



# ລາຍດອກຂອດ ຊິງກາບິນ



# ລາຍດອກຂອດ ຊຶ່ງກາບິນ



# ລາຍດອກຂອດ ຊົງກາບິນ



# ລາຍດອກຂອດ ຫົວນາກຊິງກາບິນ



# ລາຍດອກຂອດຫົວນາກ ຊົງກາບິນ



# ລາຍດອກໜ້າຂົບກັ່ນດົກ



# ລາຍດອກຂົບຊົງກາບິນ



# ລາຍດອກສັດ ວັດໃໝ່





ວັດໃໝ່





# ວັດແສນ

- ລາຍພອກດອກປະດັບຕາມຝາໜ້າສິມ

# ລາຍພອກ ວັດແສນ



“ ຫົງ ” ລາຍພອກ ວັດແສນ



ລາຍພອກ ວັດແສນ



"ລາຊະສີ" ລາຍພອກ ວັດແສນ



# ວັດ ຊຽງທອງ

- ລາຍດອກປະດັບທໍ່ທຳນາດແລະຕາມຂອບແທ່ນ

- ມີລາຍດອກພອກ, ລາຍດອກຄວັດດ້ວຍໄມ້ແລະລາຍດອກທີ່ເຮັດດ້ວຍຂະມຸ

( ສ່ວນຫາງລາຍກໍ່ເຫັນແຕກຫັກແລະພຸພັງໂຮມຢູ່ໃນແຈທໍ່ພະລາຊະລົດ

“ ນາງກິນນາລີ ” ລາຍພອກເສົາ
ວັດຊຽງທອງ



ລາຍດອກ ຈອມສີໜ້າສິມ ວັດຊຽງທອງ



ລາຍດອກຂອບ "ກ້ານປູ" ວັດຊຽງທອງ



ลายดอกลอย "ก้ามปู"



ລາຍດອກຂອບ ບໍ່ທຳມາດ ວັດຊຽງທອງ



ລາຍດອກຂອດ ກ້າມປູ ( ວັດຊຽງທອງ )



ລາຍດອກກ້ານປູຍ້ອຍ

" ວັດຊຽງທອງ "



ລາຍດອກທຳທຳມາດ ວັດຊຽງທອງ



ລາຍດອກຂອດກ້ານປູ



ລາຍດອກບົວເຄືອຂອດ ‘ ກ້ານປູ ’



# ລາຍດອກຂອບ " ກ້າມປູ "



ລາຍດອກເຄືອຂອດ "ກ້ານປຸ"



ລາຍດອກຂອບ "ກ້ານປູກູດ"



# ລາຍດອກກັ່ນດົກ ວັດຊຽງທອງ



ລາຍດອກກາບຂັນ



# ລາຍດອກ ບົວເຄືອກູດ



# ລາຍດອກເຄືອກູດ



ลายดอก ลอย



ລາຍດອກຂອບ



# ລາຍດອກຂອບ



ລາຍດອກຂອບ “ ກັ່ນດົກ ”



## ລາຍດອກຂອບ



# ລາຍດອກຊອບ





ລາຍດອກຂອບ



ລາຍດອກ ຫົງ ກ້ານປູ



ລາຍດອກ ກັ່ນດິກນາກກ້ຽວ ກ້ານປູ



# ລາຍດອກ ກ້ານປູ " ນາກ "



# ລາຍດອກ ສິງ ກ້ານປູ



# ລາຍດອກຂອບ



ສີບ້ານ້ອຍ  ມຸກ ບໍຫໍາມາດ



ສີບນ້ານ້ອຍ ມຸກ ບຳບຳມາດ



# ວັດ ລ້ອງ ຄູນ

- ລາຍດອກປະດັບຂອບບານປະຕູ, ບານປ່ອງຢ້ຽມແລະສີຫນ້າ.

- ມີລາຍດອກພອກແລະລາຍດອກທີ່ຄວັດດ້ວຍໄມ້ ( ສ່ວນຫລາຍໃກ້ຈະພຸພັງແລ້ວ )

24 / VII
ຫ້າມຈຳໜ່າຍ

ລາຍພອກ ປ່ອງຢ້ຽມ ວັດລ້ອງຄູນ





# ລາຍດອກຊິງກາບິນ ວັດລ້ອງຄູນ



# ລາຍດອກຊິງກາບິນ ວັດລ້ອງຄູນ









# ລາຍດອກພອກ ວັດລ້ອງຄູນ





โง่



## ນາກສະດຸ້ງ





ລາຍດອກ ຮວງເຜີ້ງ ກະດີວັດກົ້ໄຊຽງແມນ



# ຫານຸມານ ຊົມນາງມັດສາ







# ລາຍດອກແຈສີໜ້າ



# ລາຍດອກແຈສີໜ້າ



- ລາຍດອກແຂນນາງ
- " - ບານປະຕູ
- " - ບານປ່ອງຢ້ຽມ
- " - ສີຫນ້າວັດຊຽງທອງ
- " - ຮາວທຽນວັດຊຽງມ່ວນແລະວັດຈູມຄ້ອງ.

# ລາຍດອກແຂນນາງ

ວັດຊຽງແມນ



ວັດກີລີ





< ແຂນນາງ ວັດສີບຸນເຮືອງ



ແຂນນາງ ວັດ ຫາດສ້ຽວ >

ແຂນນາງວັດຊຽງທອງ



"ແຂນນາງ" ຂອງຊຽງຂວາງ
ຢູ່ໜ້າລະບຽງ ຫໍພິພິດທະພັນ



ດ້ານໜ້າຊຸ່ມປະຕູ ວັດຊຽງແມນ





# ຊຸ່ມປະຕູ ຂ້າງຊ້າຍ ສິມວັດຊຽງແສນ



ຊຸ່ມພະເຈົ້າໃຫຍ່ໃນສິມ ວັດຊຽງແສນ





# ສີໜ້າ ວັດທາດຈອມສີ



24/VII
ຫ້າມຈຳໜ່າຍ

"ລາຍດອກ ກະຈັງຫູ" ສີໜ້າວັດທາດຈອມສີ.







ສີໜ້າ ວັດຫາດຈອມສີ



ສີໜ້າຫໍແຈກ ວັດໃໝ່



ສີຫນ້າ ວັດຊຽງທອງ



ສີໜ້າແຈ ວັດຊຽງທອງ





ຮວງເຜີ້ງ ໜ້າເສີມ ວັດຊຽງທອງ

# ສີໜ້າ ດ້ານໜ້າອຸບມຸງ
# ວັດຊຽງທອງ



ສີຫນ້າ ດ້ານຫລັງອຸບມຸງ
ວັດຊຽງທອງ



ລາຍດອກ ປະຕູ ຫລັງ
ສິມ ວັດຊຽງທອງ



ລາຍດອກ ປະຕູໜ້າ
ສິມ ວັດຊຽງທອງ



ລາຍດອກ ປ່ອງຢ້ຽມ ວັດຊຽງທອງ



# ລາຍດອກ ປະຕູຫລັງ
## ວັດ ອາຣາມ



# ລາຍດອກ ປະຕູໜ້າ " ຂວາ "
# ວັດ ວິຊຸນ





ລາຍດອກ ປະຕູໜ້າ " ຊ້າຍ "

**ວັດ ວິຊຸນ**

## ລາຍດອກ ປະຕູ " ຊ້າງ "
## ວັດ ວິຊຸນ



## ບານປະຕູອຸບມຸງຫນ້າສິມ

| ວັດໃຫມ່ | ວັດ ບໍ່ສ່ຽງ |
| --- | --- |
|  |  |

ລາຍດອກ ປ່ອງຢ້ຽມ
ວັດ ບໍສ່ຽງ



ລາຍດອກ ປະຕູ ວັດໂພນໄຊ





ລາຍດອກ ປະຕູອຸບມຸງ
ວັດ ຊຽງມ່ວນ



ລາຍດອກ ປະຕູ
ວັດ ສັງຄະໂລກ



ລາຍດອກ ປະຕູ
ວັດແສນ





## ລາຍດອກ ປະຕູ ວັດແສນ



## ລາຍດອກ ປະຕູ
## ວັດສັງຄະໂລກ





ລາຍດອກປະຕູວັດປາກຫລິ້ງ



ລາຍດອກປະຕູວັດສີມຸງຄຸນ



ລາຍດອກ ປະຕູ
ວັດ ປາກອູ



ລາຍດອກ ປະຕູ
ວັດ ປາກເຊືອງ



ລາຍດອກ ປະຕູ
ວັດ ດອນໂມ



ລາຍດອກ ປະຕູ ວັດດອນໂມ



ລາຍດອກ ເຄືອ “ ຄວັດຊອດ ”
ເບື້ອງຫລັງແທ່ນພະ ວັດວິຊຸນ







ຂັ້ນໄດແຫ່ນຫໍທໍາມາດ
" ວັດວິຊຸນ "

ຮາວທຽນ ວັດຊຽງມ່ວນ



ຮາງຫຽນ ວັດຈຸມຄ້ອງ





ລາຍດອກ ພາກຸດ ໃສ່ດອກໄມ້

ບູຊາພະ ວັດຊຽງທອງ



ລາຍດອກ ຄວັດ ເປັນກະດານໃຫຍ່
ປະດັບ ຂ້າງຝາໃນສິມ
ວັດວິຊຸນ

ພິມຄັ້ງທີ ໑
ຈຳນວນ ໘໐໐໐ ຫົວ
ພິມແລ້ວ ໓໑/໓/໑໙໘໓
ສະຫງວນລິຂະສິດ

ພິມທີ່ ໂຮງພິມແຫ່ງລັດ